## ໂຄງການ ການເມືອງ(18)ຂໍ້ ໝາຍເຖິງຫຍັງແນ່ (1)

1- ໝາຍເຖິງໃຫ້ປະຊາຊົນລາວມີສິທທິໃນການປາກເວົ້າ ມີສິທທິໃນການອອກຄວາມຄິດຄວາມເຫັນມີສິທທິໃນການໄປມາຫາສູ່ມີສິທທິໃນການເລືອກຕັ້ງທຸກຂແນງ ມີສິທທິໃນການຈັດກຸ່ມກອັນຊຸມນຸມສະມາຄົມຫຼືທາງການເມືອງທີ່ເໝາະສົມ

2- ສານປະຊາຊົນ ໝາຍຄວາມວ່າປະຊາຊົນເປັນເຈົ້າຂອງປະເທສແລະ ໃຫ້ປະຊາຊົນມີສິທໃນການອອກສຽງໃນທາງດີທາງຊອບ ໃຫ້ມີຄວາມຄິດແລະອອກເສັຽຕາມສຽງສ່ວນຫລາຍ

3- ຕອ້ງຮັກສາພູມສະຖານ ຄືຊັພຍາກອນທັມຊາຕ ເຊັ່ນພູຜາ ປ່າໄມ້ຫວ້ຽນ້ຳລຳທານ ແລະບໍ່ແຜ່ບໍ່ພອຽຕ່າງ ໆ

4- ມີການຊວ່ຽເຫລືອປະຊາຊົນທີ່ຍາກຈົນ ຕາມຊົນລະບົດຕ່າງໆໃຫ້ມີການພັທນາຕາມທອ້ງຖິ່ນແລະບໍ່ໃຫ້ຂົ່ມຂູ່ຂູດຮີດປະຊາຊົນ ປະຊາຊົນຕອ້ງມີສິທເສຣີພາບທຸກຄົນຕອ້ງມີຄວາມສເມີພາບກຽດກັບສິທ ສິທໝາຍຄວາມວ່າທຸກຄົນຕອ້ງມີສິທເທົ້າທຽມກັນແຕ່ທຸກຄົນຈະຖືເອົາຍົດຖາບັນດາສັກໂດຽການເກີດຂອງຕົນຫຼືໂດຽການແຕ່ງຕັ້ງແລະການຢ່າງອື່ນມາອາ້ງເພື່ອໃຫ້ເກີດມີສິທຢ່າງໄດຢ່າງນຶ່ງຂື້ນບໍ່ໄດ້ກັມມະສິທຂອງ ທຸກຄົນຕອ້ງໄດ້ຮັບການຄຸ້ມຄອງຈາກສິທ ສິທໝາຍຄວາມວາ່ປະຊາຊົນລາວໃນທຸກຊົນຊາຕ ຕອ້ງມີກັມສິທໃນຊັບສົມບັຕຂອງຕົນແລະທຸກຄົນຕອ້ງມີສິທຮອ້ງທຸກຕໍ່ເຈົ້າໜາ້ທີ່ ເມື່ອເຫັນວາ່ຕົນເອງບໍ່ໄດ້ຮັບຄວາມຍຸຕິທັມຈາກການປະຕິບັດຂອງເຈົ້າໜາ້ທີ່ຄົນໄດຄົນນຶ່ງປະຊາຊົນຕອ້ງມີສິທຮອ້ງທຸກໄດ້ຕາມກົດໝາຍ

5- ຕອ້ງຮັກສາບາ້ນເມືອງ ຢາ່ໃຫ້ມີຄົນຮັກຄົນໂຈນແລະຢາ່ໄດ້ຂາ້ຟັນຮັດແທງກັນອັນໃດຜິດອັນໃດຖືກໃຫ້ນຳເອົາມາພິຈາຣະນາເສັຽກອ່ນພວກເຮົາບໍ່ໃຫ້ຂາ້ຄົນເພື່ອສົມບັດແລະອຳນາດຣັຖທັມນູນໄດ້ບັນລຸເອົາໄວ້ວ່າ ສັນຊາຕລາວທຸກໆຄົນມີສິທເທົ້າທຽມກັນມີສິທລົງຄະແນນສຽງໃນການເລືອກຕັ້ງ ໂດຽບໍ່ໃຫ້ມີການຈຳແນກເຊື້ອຊາຕຊົນຊາຕແລະຜູ້ມີອຳນາຈແຕ່ຢາ່ງໄດ

6- ພັກນຳພາໝາຽເຖິງຈະຜິດຫຼືຖືກແນ່ນປະຊາຊົນມີສິທທິ ອອກຄວາມຄິດຄວາມເຫັນໄດ້ໃນຄວາມສາມາຕຂອງໃຜຂອງມັນ

7- ປະຊາຊົນເປັນເຈົ້າ-ໝາຽເຖິງວ່າພໍ່ແມ່ພີ່ນ້ອງປະຊາຊົລລາວໃນທຸກຊົນຊາຕ
ຊົນເຜົ່າຂອງລາວແຕ່ເໜືອຕຣອດໄຕ້ຕອ້ງເປັນເຈົ້າຣັກສາຊັບໃນດິນສິນໃນນ້ຳປາ່
ດົງພົງໄພໄຣ່ນາຮົ້ວສວນແລະເຄື່ອງໃຊ້ພາຽໃນບາ້ນເຮືອນຂອງຕົນແລະປາ່ດົງ
ພົງໄພຕົ້ນໄມ້ໃນຫົວໄຮ່ປາຽນາຂອງຕົນເອງຈະຕັສມາປຸກສາ້ງບາ້ນເຮືອນຫຼືປຸກ
ຂາຽກໍ່ໄດ້ຕາມກົດໝາຽ ສວ່ນພາສີອາກອນນັ້ນຈະເກບຕາມຖານະຂອງຊົນຊັ້ນ
8- ຣັຖຄຸ້ມຄອງ-ໝາຽເຖິງຊັບໃນດິນສິນໃນນ້ຳໄຣ່ນາຮົ້ວສວນແລະງົວຄວາຍທັງ
ໝູໝາເປດໄກ່ຂອງປະຊາຊົນເທົ່ງຕອ້ງແມ່ນພໍ່ແມ່ພີ່ນ້ອງປະຊາຊົນເປັນຜູ້ຄຸ້ມຄອງ
9- ການປະກອບສວ່ນນັ້ນ ກໍ່ໄດ້ແຕ່ກັບຄວາມຮູ້ຄວາມສາມາຕຂອງຄົນແຕ່ຣະຄົນ
ຢູ່ທີ່ປະເທສລາວຖາ້ຜູ້ໃດເປັນຄົນເຖົ້າຄົນເຝົ່າຫຼືເປັນຄົນເສັຽອົງຄະ
ແລະເດັກກຳພາ້ຕອ້ງດຽ້ງດູໃຫ້ດີໆ
10-ປະເທສລາວນີ້ ຕອ້ງປົກຄອງດວ້ຽຣະບອບປະຊາທິປະໄຕແລະໃຫ້ມີພຣະມະ
ຫາກະສັຈເປັນປະມຸກຂອງຊາຕສວ່ນປະຊາຊົນກໍ່ໃຫ້ມີສິທທິ ໃນການປາກເວົ້າ
ໃນການຂີດຂຽນໃນການຊຸມນຸມຊົນໃນການສະແດງທາງດາ້ນການເມືອງແລະ
ໃຫ້ປະຊາຊົນມີສິທທິຢາກເຊື່ອຖືສາສນາໃດກໍ່ໄດ້
11-ໂຄງການ ການເມືອງ-18-ຂໍ້ນັ້ນໄດ້ເວົ້າວ່າມີຖານະຄືກັນກັບຣັຖທັມນູນທີ່ເຄີຽ
ປົກຄອງມາແລ້ວໃນ-12-ຂໍ້ຄັ້ງຕົ້ນນັ້ນເປັນນະໂຍບາຽພາຽໃນປະເທສ6ຂໍ້ຂາ້ງປາຽ
ນັ້ນເປັນນະໂຍບາຽຕາ່ງປະເທສແຕ່ຣະຂໍ້ແຕ່ຣະມາຕຕານັ້ນໄດ້ໂບງບອກຈະແຈ້ງວ່າ
ປະເທສລາວນີ້ຕອ້ງປົກຄອງດວ້ຽຣະບອບປະຊາທິປະໄຕແລະໃຫ້ມີພຣະມະຫາກະສັຈ
ເປັນປະມຸກຂອງຊາຕແລະໃຫ້ຍືດໝັ້ນຢູ່ໃນທາງສາສນາທາງພຣະມະຫາກະສັຈຫຼືດວ້ຽ
ຣະບອບປະຊາທິປະໄຕຢາ່ງເປັນທັມເພື່ອໃຫ້ປະຊາຊົນມີສິທເສຣີພາບໃນການທຳມາ
ຫາກິນໃນການພັທນາຕົວເອງເປັນຂຸນສຶກສັກດີນານາຽທຶນໄດ້
ໃນຄວາມສາມາຕຂອງໄຜຂອງມັນ
12-ສວ່ນຫີນສີລາແຜ່ນໝານັ້ນ ເມື່ອມັນມີຣອຽແຕກແລ້ວໃຫ້ພາກັນຣັກສາໄວ້
13-ເລື້ອງການສຳມະນາ ໃນການສຳມະນາອັນທີ່ນີ່ງນັ້ນ ວາ່ດວ້ຽຄວາມ
ຮາ່ງມີຂອງປະເທສລາວໃນປະເທສລາວນີ້ມີຊັພຍາກອນທັມຊາຕຄືມີພູຜາປາ່ໄມ້

ນອັຽໃຫ່ຽແລະມີແມ່ນ້ຳນອັຽໃຫ່ຽໃຫລເຂົ້າສູ່ລຳແມ່ນ້ຳໂຂງມີ-16-ແຫ່ງ ອັນທີສອງ ວ່າດວ້ຽຄວາມຍາກຈົນຂອງປະຊາຊົນລາວ ປະເທສລາວກໍ່ມີຄວາມຮ່າງມີ ເປັນ ຫຍັງຄົນລາວຈຶ່ງຍາກຈົນ ໃນການສຳມະນາອັນທີສາມແມ່ນໄປລວມກັນເພື່ອປືກ ສາຫາລືໃນທາງດີທາງຊອບແລະປືກສາໃຫ້ມີຄວາມເຂົ້າໃຈຊື່ງກັນແລະກັນຄວາມ ໝາຽໃນຄຳວ່າ ສຳ ແປວ່າພອ້ມຫຼືວ່າດີ ມະນາ ແປວ່າ ໃຈຍົ່ງຍຸດປັດໃຈເປັນອານະ ອັນນີ້ ເວົ້າລວມແລ້ວ ກໍ່ຄືພາກັນໄປປືກສາຫາລືໃນການສາ້ງສາປະເທສຊາຕໃນ ທາງດີທາງຊອບ

14-ສວ່ນທາງສາສນາບໍ່ຫຍຸ້ງກຽ່ວກັບປະຊາຮາສດອນແລະໃຫ້ເປັນກາງໄປສເມີ ເພື່ອບໍ່ໃຫ້ມີບັນຫາກັບປະຊາຊົນຂອງຕົນການຕໍ່ສູ້ເລື້ອງການບາ້ນການເມືອງນັ້ນກໍ່ ໃຫ້ເປັນເລື້ອງຂອງເບີດທຸກຄົນໃນຊາຕສອນພໍ່ຄາ້ຊາວຂາຽພໍ່ໄຮ່ຊາວນາແລະຕາ ສີຕາສານາງມີນາງມານັ້ນບໍ່ໃຫ້ຖືວ່າກູພໍພຽງແຕ່ເປັນຊາວນາໃຫ້ຖືຕົນເອງ ວ່າເລື້ອງການບາ້ນການເມືອງນັ້ນມັນເປັນເລື້ອງຂອງເບີດທຸກຄົນໃນຊາຕ

15-ວ່າດວ້ຽການເລືອກຕັ້ງ ໄດ້ບົ່ງບອກລັກແນ່ວ່າຄົນທີ່ບໍ່ມີສິດໃນການເລືອກຕັ້ງ ແລະມາສມັກເລືອກຕັ້ງນັ້ນມີຢູ່ສາມປະເພດຄືປະເພດອັນທີນຶ່ງ-ເດັກອາຍຸຕໍ່າກວ່າ- 18-ປີລົງມາ-ສອງ-ນັກໂທດທຸກປະເພດ-ສາມ-ຄົນໃບ້ບາ້ເສັຽຈິດບໍ່ມີສິດໃນການ ເລືອກຕັ້ງບໍ່ມີສິດໃນການມາສມັກເລືອກຕັ້ງໄດ້

<u>**ໂຄງການ ການເມືອງ-18-ຂໍ້ນີ້ ແມ່ນໂຄງການຂອງສູນກາງພັກ**</u>

ຜູ້ແຕ່ງເລື້ອງແມ່ນພະຍາພູມີ ວົງວິຈິດເປັນຄະນະກົມການເມືອງສູນກາງພັກ
ຜູ້ລຽບລຽງແລະຂຽນແບບແມ່ນທາ່ນສີຊະນະສີສານເປັນຄະນະລາວອິສຣະ
ຜູ້ນຳອອກເຜີຍແຜ່ແມ່ນຄຳໄຕສີພັນດອນເປັນຄະນະກົມການເມືອງ
ສູນການພັກຝາ່ຽຄອມມຸນີສມຸນີສວຽດນາມ 100 %

ມີຄວາມເຫັນພອ້ມຈາກຂບວນການລາວອິສຣະ
ທີ່ສູນກາງພັກນະຄອນວຽງຈັນ